# ບົດສະເໜີ

## ການສຳມະນາ ໂລຈິສຕິກນາໆຊາດ ຄັ້ງທີ 5 ( Northern Logistic forum 2017 )

ໃນລະຫວ່າງວັນທີ 27 - 30 ມີນາ 2017

ໃນຫົວຂໍ້ : ແນວທາງການພັດທະນາ ແລະ ຄວາມຮ່ວມມືໃນການເຊື່ອມໂຍງລະບົບໂລຈິສ ຕິກພາຍໃນອະນຸພາກພື້ນ GMS )



# I. ຍຸດທະສາດ ການພັດທະນາພື້ນຖານໂຄງລ່າງ ດ້ານຄົມມະນາຄົມ ແຂວງ

## 1. ການເຊື່ອມໂຍງຂອງ ແຂວງບໍ່ແກ້ວໄດ້ກຳນົດໄວ້ ມີ 3 ເສັ້ນທາງ

- ການຄົມມະນາຄົມ ທາງບົກ
- ການຄົມມະນາຄົມ ທາງນໍ້າ
- ການຄົມມະນາຄົມ ທາງອາກາດ

## 2. ຍຸດທະສາດການພັດທະນາພື້ນຖານວຽກງານ ໂຄງລ່າງ ໂຍທາທິການ ແລະ ຂົນສົ່ງ.

- ສະດວກ
- ວ່ອງໄວ
- ທົ່ວເຖິງ ແລະ ມີຄຸນນະພາບ

## 3. ການເຊື່ອມໂຍງກັບບັນດາຂົງເຂດພາກພື້ນ ເພື່ອອຳນວຍຄວາມສະດວກ.

- ສົ່ງເສີມການຂົນສົ່ງສິນຄ້າ ແລະ ໂດຍສານ
- ສົ່ງເສີມການຄ້າ ແລະ ການທ່ອງທ່ຽວ
- ສົ່ງເສີມການລົງທືນພາຍໃນ ແລະ ຕ່າງປະເທດ

# 4. ການເຊື່ອມໂຍງກັບບັນດາຂົງເຂດພາກພື້ນ ເພື່ອອຳນວຍຄວາມສະດວກ.

- ທີ່ຕັ້ງຂອງແຂວງເອື້ອອຳນວຍຕໍ່ການເຊື່ອມໂຍງດ້ານຄົມມະນາຄົມຂົນສົ່ງສິນຄ້າ,ດ້ານໂລຈິດຕິກ ແລະ ເສັ້ນທາງຜ່ານໃນການເຊື່ອມໂຍງດ້ານການຄ້າຂອງບັນດາປະເທດອາຊຽນ ກັບ ສປ ຈີນ ຊຶ່ງເປັນຕະຫຼາດໃຫຍ່ ແລະ ມີຄວາມຕ້ອງການສູງ.

- ເປັນແຂວງທີ່ມີຊາຍແດນຕິດກັບແມ່ນ້ຳຂອງ, ມີຂົວຂ້າມນ້ຳຂອງ ແລະ ເສັ້ນທາງ R3 ໃຊ້ເຊື່ອມຕໍ່ລະຫວ່າງປະເທດລາວ,ໄທ,ມຽນມາ ແລະ ສປ ຈີນ,ເປັນທາງຜ່ານໃນການຂົນສົ່ງສິນຄ້າໄປ ສປ ຈີນທີ່ມີໄລຍະທາງທີ່ສັ້ນ.

- ເປັນຈຸດນຳເຂົ້າ-ສົ່ງອອກສິນຄ້າຕົ້ນຕໍຂອງບັນດາແຂວງພາກເໜືອ ລະຫວ່າງສປລາວ ແລະ ປະເທດໄທ ແລະ ມີສາຂາທະນາຄານ 08 ແຫ່ງໃນນີ້ມີ 06 ແຫ່ງທີ່ມີບໍລິການທາງດ້ານການເງິນລະຫວ່າງປະເທດ.



- ການຄ້າຂາຍຊາຍແດນ ລະຫວ່າງ ແຂວງບໍ່ແກ້ວ ກັບປະເທດ ເພື່ອນບ້ານ ໂດຍພື້ນ ຖານແມ່ນອີງໃສ່ ຄວາມສຳພັນແບບຍາດພີ່ນ້ອງ, ບ້ານໃກ້ເຮືອນຄຽງ ຊຶ່ງລັກສະນະການຄ້າໃນເມື່ອກ່ອນແບບນີ້ຈະມີຜົນກະທົບໜ້ອຍທີ່ສຸດ ຕໍ່ການປ່ຽນແປງ ນະໂຍບາຍຂອງພາກລັດ.

- ຈາກສະຖິຕິ ມູນຄ່າ ການຄ້າຂອງແຂວງ ໃນ 5 ປີ (2011-2015) ເຫັນວ່າປະເທດໄທເປັນປະເທດຄູ່ຄ້າອັນດັບທຳອິດ ຊຶ່ງກວມເອົາ 58.79 % ຂອງມູນຄ່າການຄ້າທັງໝົດ.



* ຕາໜ່າງເສັ້ນທາງຕາມແລວ "ເສດຖະກິດ ເໜືອ - ໃຕ້ " ( North-South Economic corridor ) ຈາກ ສປ ຈີນ - ຣາຊະອານາຈັກໄທ - ບັນດາປະເທດ Asian. ດັ່ງນັ້ນ ແຂວງບໍ່ແກ້ວ ຈຶ່ງເປັນ Getway ສໍາລັບເສັ້ນທາງຜ່ານໃນແລວເສດຖະກິດດັ່ງກ່າວນີ້.



# II. ພື້ນຖານໂຄງລ່າງຂອງ ແຂວງບໍ່ແກ້ວ ທີ່ເຊື່ອມໂຍງຕາມແລວເສດຖະກິດ ( ເໜືອ -ໃຕ້ North-South Economic corridor )

ພວກເຮົາມີເສັ້ນທາງຫລວງແຫ່ງຊາດ R3 ເຊື່ອມໂຍງລະຫວ່າງພາກໃຕ້ ສປ ຈີນ ກັບບັນດາປະເທດອາຊຽນ ເອີ້ນວ່າ ເສັ້ນທາງບາງກອກ - ຄຸນມິງ ໂດຍຜ່ານສອງ ແຂວງຫລວງນ້ຳທາ ແລະ ແຂວງບໍ່ແກ້ວ ເປັນໂຄງການເພື່ອເຊື່ອມໂຍງເຄືອຂ່າຍການຄົມມະນາ ຄົມຂົນສົ່ງ ລະຫວ່າງ ສປ ຈີນ, ສປປ ລາວ ແລະ ຣາດຊະອານາຈັກໄທເຂົ້າດ້ວຍກັນ ເຊິ່ງຈະຊ່ວຍສົ່ງເສີມການຄ້າຂາຍ, ການຄົມມະນາຄົມ ແລະ ຊ່ວຍເພີ່ມຄຸນນະພາບຊີວິດຂອງປະຊາຊົນໃນສາມປະເທດ ລວມທັງຍັງມີສ່ວນເຊື່ອມຕໍ່ເຄືອຂ່າຍຄົມມະນາຄົມຂົນ ສົ່ງພາຍໃນປະເທດ ທາງພາກເໜືອຂອງ ສປປ ລາວ ເຊິ່ງບໍ່ມີຊາຍ ແດນຕິດຈອດກັບທະເລ ທີ່ໃຊ້ເປັນເສັ້ນທາງໃນການຂົນສົ່ງສິນຄ້າທີ່ນຳເຂົ້າສູ່ຕະຫລາດ ພາຍໃນປະເທດ ແລະ ສົ່ງອອກສູ່ຕະຫລາດຕ່າງປະເທດ. ເປັນໂຄງລ່າງທີ່ສຳຄັນ ແລະ ພື້ນຖານໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມຂອງແຂວງ ເພື່ອສົ່ງເສີມການຄ້າ, ການລົງທືນ, ການຂົນສົ່ງ, ການທ່ອງທ່ຽວ ແລະ ອື່ນໆ...



North-South Economic Corridor
Chiang Rai – Kunming (R3E)
Distance 1,026 kms.
Southern China
Kunming
Yuxi
R3
Yuanjiang
Pu'er
Simao
Jinghong
R3W
Dalua
R3E
Keng Tong
Mohan
Louang Namtha
R3W
Myanmar
Muang Xai
R3E
Tachilek
Mae Sai
Houayxay
Chiang Rai
Louang Prabang
Huai Kon
Thailand
Lao PDR
YUNNAN

- ພວກເຮົາມີຂົວມິດຕະພາບແຫ່ງທີ 4 (ຫ້ວຍຊາຍ - ຊຽງຂອງ) ຄວາມຍາວ 630 ແມັດ,

## Photograph of Main Bridge, M1-M11



# ເສັ້ນທາງເຊື່ອມຈາກທາງເລກ 1020 ໃນໄທ ແລະ R3 ໃນລາວລວມ 11ກມ.



## III. ຕາໜ່າງຄົມມະຄົມທາງນ້ຳ ( ການເຊື່ອມໂຍງທາງນ້ຳ ).

- *ແມ່ນ້ຳຂອງເປັນແມ່ນ້ຳໃຊ້ໃນການເດີນເຮືອຂົນສົ່ງໂດຍສານ ແລະ ຂົນສົ່ງສິນຄ້າພາຍໃນ ແລະ ຕ່າງ ປະເທດ ຄື:* ການເດີນເຮືອໂດຍສານສຳລັບການທ່ອງທ່ຽວຈາກ ຫ້ວຍຊາຍ - ຫລວງພະບາງ, ມີຈຳນວນເຮືອທ່ອງທ່ຽວທັງໝົດ 54 ລຳ ແລະ ຈຳນວນນັກທ່ອງທ່ຽວແຕ່ລະວັນປະມານ 100-120 ຄົນຕໍ່ຖ້ຽວ/ລຳເຮືອ ແຕ່ລະປີຈຳນວນນັກທ່ອງທ່ຽວປະມານ 38,537 ຄົນ/ປີ ເຮືອທ່ອງທ່ຽວແຕ່ລະປີມີ 383 ຖ້ຽວ/ລຳເຮືອ/ປີ ເພີ່ມຂຶ້ນເປັນລຳດັບສະເລ່ຍ 23,73%



* + ການຂົນສົ່ງສິນຄ້າ ຈາກທ່າເຮືອບ້ານມອມ ແຂວງບໍ່ແກ້ວ - ທ່າເຮືອສືບໂລຍ ມຽນມາ - ທ່າເຮືອກ້ອນເລີຍ ສປ ຈີນ ມີຄວາມຍາວ 200ກມ, ໄດ້ປັບປຸງຄ່ອງ ເດີນເຮືອ ແລະ ເຄື່ອງໝາຍການເດີນເຮືອ ແຕ່ ສປປ ຈີນ - ແຂວງຫລວງພະບາງ ເພື່ອເຮັດໃຫ້ແມ່ນ້ຳຂອງຕອນເໜືອກາຍເປັນເສັ້ນທາງທ່ອງທ່ຽວ ແລະ ຂົນສົ່ງສິນຄ້າ ລະຫວ່າງບັນດາ 4 ປະເທດ GMS ລຸ່ມແມ່ນ້ຳຂອງ ( ຫວຽດນາມ, ລາວ, ໄທ, ມຽນມາ )



- ການຂົນສົ່ງເຮືອສິນຄ້າຜ່ານແດນລວມທັງໝົດ ມີ 333 ລຳ ແຕ່ລະປີສາມາດຂົນສົ່ງສິນຄ້າສະເລ່ຍ 408ຖ້ຽວ/ປີ



• ການຂົນສົ່ງສິນຄ້າລະຫວ່າງບັນດາ 4 ປະເທດ GMS ລຸ່ມແມ່ນ້ຳຂອງ (ຫວຽດນາມ, ລາວ, ໄທ, ມຽນມາ )



# The Connection to R3A and R3B




Baan Mom International Port
Bokeo, Lao PDT

- ການຂົນສົ່ງສິນຄ້າລະຫວ່າງບັນດາ 4 ປະເທດ GMS ລຸ່ມແມ່ນ້ຳຂອງ (ຫວຽດນາມ, ລາວ, ໄທ, ມຽນມາ )

## IV. ສະພາບການເຊື່ອມໂຍງການຄ້າ, ການທ່ອງທ່ຽວ, ການຂົນສົ່ງຜ່ານແດນໃນປະຈຸບັນ

* ປະຈຸບັນພວກເຮົາມີການຂົນສົ່ງໂດຍສານລະຫວ່າງປະເທດດັ່ງນີ້ : ເສັ້ນທາງ ຫ້ວຍຊາຍ - ຊຽງຮຸ່ງ - ຄຸນມິງ ສປ ຈີນ, ອາທິດໜຶ່ງມີ 7 ຖ້ຽວຈຳນວນນັກທ່ອງທ່ຽວສະເລ່ຍ 168 ຄົນ



* ເສັ້ນທາງ ຫ້ວຍຊາຍ - ຊຽງຮາຍ - ຊຽງໃໝ່ ລາດສະອານາຈັກໄທ, ອາທິດໜຶ່ງ ມີ 14 ຖ້ຽວ ຈຳນວນນັກທ່ອງທ່ຽວສະເລ່ຍ 168 ຄົນ



* ການຂົນສົ່ງສິນຄ້າຜ່ານແດນ, ປະຈຸບັນຈຳນວນລົດຂົນສົ່ງສິນຄ້າຜ່ານແດນລະຫວ່າງບັນດາປະເທດ ອາຊຽນ - ສປ ຈີນ ນັບມື້ນັບເພີ່ມຂຶ້ນ ສະເລ່ຍມື້ໜຶ່ງ 200 ຄັນ ໃນນັ້ນສິນຄ້າສ່ວນຫຼາຍແມ່ນ ປະເພດ ຜັກ , ໝາກໄມ້, ອາຫານ, ເຄື່ອງມືອຸດສາຫະກຳ, ເຂົ້າ, ນ້ຳມັນ ແລະ ອື່ນໆ...




- ພາຫານະທີໃຊ້ໃນການຂົນສົ່ງສິນຄ້າຜ່ານແດນໃນປະຈຸບັນ

V. ການພັດທະນາພື້ນຖານໂຄ່ງລ່າງໃນອະນາຄົດແຂວງບໍ່ແກ້ວ..

*1. ປັບປຸງສ້ອມແປງສະໜາມບິນຫ້ວຍຊາຍ* ໃຫ້ຮອງຮັບເຄື່ອງບິນ ATR ລົງໄດ້ ແລະ ສໍາຫຼວດອອກແບບສະໜາມບິນສາກົນແຫ່ງໃໝ່.



2. *ປັບປຸງ ແລະ ສ້ອມແປງທ່າເຮືອ ບ້ານ ມອມ, ເມືອງຕົ້ນເຜີ້ງ* ໃຫ້ກາຍເປັນທ່າເຮືອທີ່ ທັນສະໄໝ, ປັບປຸງລະບົບການ ບໍລິຫານ ທ່າເຮືອ, ກໍ່ສ້າງພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ ເປັນຕົ້ນໂຮງແຮມ, ບ້ານພັກ, ຮ້ານອາຫານ, ສາງຂົນຖ່າຍ ສິນຄ້າ ແລະ ອື່ນໆ...




| PROJECT DESCRIPTION | | | |
|---|---|---|---|
| NO. | DESCRIPTION | AREA | UNIT |
| 1. | PORT | 28-0-0 | RAI |
| 2. | HOTEL | 3-2-8 | RAI |
| 3. | LOAS MART DUTY FREE | 20-3-80 | RAI |
| 4. | WAREHOUSE | 9-3-90 | RAI |
| 5. | MARKET | 2-1-60 | RAI |
| 6. | PACKAGING AREA | 4-2-87 | RAI |
| 7. | PARK THE BUS | 7-0-80 | RAI |
| 8. | CONTAINER YARD | 8-3-70 | RAI |
| 9. | LODGING | 2-3-80 | RAI |
| 10. | WEIGH | 0-2-70 | RAI |
| 11. | CHECKPOINT PLANTS, ANIMALS | 370 | SQ.M |
| 12. | OFFICE LOADING | 3-1-60 | RAI |
| 13. | EXSITING BUILDING | - | - |

# *3. ຊຸກຍູ້ການສຳຫຼວດອອກແບບເສັ້ນທາງ hightway* ຈາກສາຍແດນ ສປ ຈີນ - ຫ້ວຍຊາຍ ( ຂົວມິດຕະພາບ 4 )



- ບັນດາໂຄງການທັງໝົດທີ່ຂ້າພະເຈົ້ານຳສະເໜີມານີ້ ກໍ່ເພື່ອແນໃສ່ເຮັດໃຫ້ປະເທດຊາດ ກໍ່ຄື ແຂວງບໍ່ແກ້ວ ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ ແລະ ເປັນການສ້າງເງື່ອນໄຂໃຫ້ການດຳເນີນທຸລະກິດ ແລະ ການລົງທຶນທັງພາຍໃນແລະຕ່າງປະເທດມີຄວາມສະດວກ ແລະ ວ່ອງໄວຂື້ນ.

# ຂໍຂອບໃຈ